ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 11 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 27 ພະຈິກ 2018

ສຳນັກງານ ຄຄຊ
ຮັບເຂົ້າ
ເລກ 1252
ວັນທີ 28 NOV 2018
ໂທລະສັບ 021 217770

## ບົດສະຫຼຸບການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ ປະຈຳເດືອນ ຕຸລາ ປີ 2018 ແລະ ທິດທາງແຜນການເດືອນຕໍ່ໄປ

## ພາກທີ I

## ຕີລາຄາສະພາບການເຄື່ອນໄຫວວຽກງານທີ່ພົ້ນເດັ່ນຂອງ ທຫລ ໃນໄລຍະຜ່ານມາ

### I. ວຽກງານການເມືອງ-ແນວຄິດ

ໃນໜຶ່ງເດືອນຜ່ານມາ, ສະພາບການເມືອງແນວຄິດຂອງສະມາຊິກພັກ-ພະນັກງານພາຍໃນຂະແໜງທະນາຄານ ມີຄວາມສະຫງົບປົກກະຕິ, ມີຄວາມອຸ່ນອ່ຽນທຸ່ນທ່ຽງ, ມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ-ລະບຽບວິໄນ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກ ແລະ ເອົາໃຈໃສ່ໃນການປະຕິບັດໜ້າທີ່ການເມືອງຂອງຕົນໄດ້ເປັນຢ່າງດີ ຊຶ່ງສາມາດສະຫຼຸບຕີລາຄາສະພາບການເຄື່ອນໄຫວທີ່ພົ້ນເດັ່ນຂອງ ທຫລ ປະຈຳເດືອນ ຕຸລາ 2018 ແລະ ທິດທາງແຜນການໃນເດືອນ ພະຈິກ 2018 ດັ່ງລາຍລະອຽດລຸ່ມນີ້:

### II. ສະພາບການເຄື່ອນໄຫວທີ່ພົ້ນເດັ່ນຂອງ ທຫລ

– ໄດ້ເຂົ້າຮ່ວມກອງປະຊຸມຕ່າງໆ: ກອງປະຊຸມກົມການເມືອງປະຈຳເດືອນ ກັນຍາ 2018; ກອງປະຊຸມຄົບຄະນະຂອງຄະນະບໍລິຫານງານສູນກາງພັກ ຄັ້ງທີ 7 ສະໄໝທີ X; ກອງປະຊຸມນາຍົກ-ຮອງນາຍົກ ລັດຖະມົນຕີ ປະຈຳເດືອນ ຕຸລາ 2018; ກອງປະຊຸມລັດຖະບານສະໄໝສາມັນ ປະຈຳເດືອນ ຕຸລາ; ກອງປະຊຸມປຶກສາຫາລືກ່ຽວກັບການແກ້ໄຂໜີ້ສິນໂຄງການລົງທຶນຂອງລັດ; ກອງປະຊຸມຄົບຄະນະຂອງກຳມາທິການ ແຜນການ, ການເງິນ ແລະ ການກວດສອບ ປະຈຳປີ 2018; ກອງປະຊຸມຄົບຄະນະຂອງ ກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມປະຈຳປີ 2018; ກອງປະຊຸມ ລະດັບສູງກ່ຽວກັບການສະເຫຼີມສະຫຼອງ ການເປີດປະເທດ ແລະ ປະຕິຮູບລະບອບເສດຖະກິດຂອງ ສປ ຈີນ; ກອງປະຊຸມປຶກສາຫາລືກ່ຽວກັບການລະດົມທຶນເພື່ອດຸ່ນດ່ຽງງົບປະມານ ແລະ ການປະກອບເພີ່ມໃຫ້ຄັງສຳຮອງເງິນຕາຕ່າງປະເທດ;

– ສຳເລັດການຈັດກອງປະຊຸມຕ່າງໆ: ກອງປະຊຸມປຶກສາຫາລືຮ່າງຂໍ້ຕົກລົງວ່າດ້ວຍການກູ້ຢືມຈາກຕ່າງປະເທດຂອງທະນາຄານ; ກອງປະຊຸມປັບປຸງຮ່າງກົດໝາຍວ່າດ້ວຍທະນາຄານທຸລະກິດ; ກອງປະຊຸມຄະນະຮັບຜິດຊອບຈັດການປະມູນອຸປະກອນລະບົບພື້ນຖານໂຄງລ່າງໄອທີຂອງ ທຫລ; ກອງປະຊຸມຄະນະຄົ້ນຄວ້ານິຕິກຳຄຸ້ມຄອງວຽກງານ ເງິນຄຣິບໂຕ; ກອງປະຊຸມປຶກສາຫາລື ກ່ຽວກັບແຜນການກຳນົດທິດທາງການສ້າງນິຕິກຳລຸ່ມກົດໝາຍວ່າດ້ວຍລະບົບຊຳລະ; ກອງປະຊຸມປຶກສາຫາລືກ່ຽວກັບວຽກງານການຫັນ LAPS ໄປເປັນນິຕິບຸກຄົນຮ່ວມກັບບັນດາທະນາຄານທຸລະກິດທີ່ເປັນສະມາຊິກ;

– ສໍາເລັດການຕ້ອນຮັບການເຂົ້າຢ້ຽມຢາມພົບປະຄະນະນໍາ ທຫລ ຂອງຜູ້ຕາງໜ້າຈາກຫົວໜ້າທີມປະເມີນເສດຖະກິດມະຫາພາກ ສປປ ລາວ ຂອງ IMF ຄົນໃໝ່ ແລະ ຄະນະຜູ້ບໍລິຫານ ບໍລິສັດ ເອັນ ແອນ ຢັງລາວ ຈໍາກັດ;

– ຈັດຕັ້ງ ແລະ ເຂົ້າຮ່ວມພິທີຕ່າງໆ: ຈັດງານວາງສະແດງຜົນງານ ແລະ ພິທີສະເຫຼີມສະຫຼອງສ້າງຕັ້ງ ທຫລ ຄົບຮອບ 50 ປີ; ພິທີເປີດສິກຮຽນໃໝ່ ແລະ ສະເຫຼີມສະຫຼອງວັນຄູແຫ່ງຊາດ; ພິທີເປີດນໍາໃຊ້ໂປແກຣມຕະຫຼາດລະຫວ່າງທະນາຄານ; ເຂົ້າຮ່ວມງານຖະແຫຼງຂ່າວຢ່າງເປັນທາງການກ່ຽວກັບການກະກຽມສະເຫຼີມສະຫຼອງວັນສ້າງຕັ້ງເມືອງວຽງໄຊ-ຖານທີ່ໝັ້ນຂອງການປະຕິວັດລາວ ຄົບຮອບ 50 ປີ.

## III. ສະພາບພົ້ນເດັ່ນການເຄື່ອນໄຫວວຽກງານວິຊາສະເພາະ

ໃນ 1 ເດືອນຜ່ານມາ, ທະນາຄານແຫ່ງ ສປປ ລາວ ໄດ້ເອົາໃຈໃສ່ຕິດຕາມສະພາບເສດຖະກິດສາກົນ; ຕະຫຼາດເງິນຕາພາຍໃນ; ການຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ; ການເຄື່ອນໄຫວຊໍາລະສະສາງ ແລະ ການຊື້-ຂາຍພັນທະບັດ; ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບຢ່າງເປັນປົກກະຕິ ໂດຍມີສະພາບຄ່ອງດີ ເຊິ່ງສະແດງອອກຄື:

### 1. ສະພາບເສດຖະກິດເງິນຕາສາກົນ

– ໃນເດືອນ 10/2018 ສະພາບເສດຖະກິດໂລກຂະຫຍາຍຕົວຫຼຸດລົງ, ເຫັນໄດ້ຈາກຄວາມຂັດແຍ່ງທາງການຄ້າລວມທັງການສ້າງກໍາແພງພາສີຕອບໂຕ້ກັນຂອງສອງປະເທດ ສ. ອາເມລິກາ ກັບ ສປ. ຈີນ ແລະ ເສດຖະກິດໃນປະເທດຂົງເຂດເອີຣົບ (EU) ຂະຫຍາຍຕົວຊ້າລົງ ລວມທັງອັງກິດ ແລະ ຍີ່ປຸ່ນ.

– ສໍາລັບອັດຕາແລກປ່ຽນ: ເງິນໂດລາອ່ອນຄ່າລົງ 0,59% ທຽບເອີໂຣ ເນື່ອງຈາກຕົວເລກເສດຖະກິດຂອງ ສ. ອາເມລິກາ ອອກມາບໍ່ດີ ເປັນຕົ້ນແມ່ນ ຕົວເລກດັດຊະນີຂະແໜງການຜະລິດ ຂອງເດືອນ 9/2018 ຫຼຸດລົງຢູ່ທີ່ລະດັບ 59,8 ຈຸດ ຈາກລະດັບ 61,3 ຈຸດ ໃນເດືອນຜ່ານມາ. ພ້ອມນັ້ນ, ໃນເດືອນ 8/2018 ໃບອະນຸຍາດການກໍ່ສ້າງ ຫຼຸດລົງຢູ່ໃນລະດັບ 5,7% ຈາກ 7,2% ແລະ ຕົວເລກດັດຊະນີຊີ້ນໍາພາວະເສດຖະກິດ ເພີ່ມຂຶ້ນພຽງແຕ່ 0,4% ຈາກທີ່ເຄີຍເພີ່ມຂຶ້ນຮອດ 0,7% ໃນເດືອນຜ່ານມາ.

– ໃນດ້ານລາຄານໍ້າມັນເພີ່ມຂຶ້ນ 6,24% ຈາກ 68,13 ໂດລາ/ບາເຣວ ມາເປັນ 73,38 ໂດລາ/ບາເຣວ ເນື່ອງຈາກໄດ້ຮັບແຮງກົດດັນຈາກການຄວໍ່າບາດຂອງ ສ. ອາເມລິກາ ຕໍ່ປະເທດອີຣານ, ຊຶ່ງເຮັດໃຫ້ຫຼາຍປະເທດໄດ້ຢຸດການນໍາເຂົ້ານໍ້າມັນດິບຈາກປະເທດອີຣ່ານ ສົ່ງຜົນໃຫ້ປະລິມານການສົ່ງອອກນໍ້າມັນດິບຂອງປະເທດອີຣ່ານ ຫຼຸດລົງມາຢູ່ທີ່ລະດັບ 1,4-2,0 ລ້ານບາເຣວ/ວັນ ຈາກ 2,8 ລ້ານບາເຣວ/ວັນ. ສ່ວນດ້ານລາຄາຄໍາເພີ່ມຂຶ້ນ 0,21% ຈາກ 1.196,20 ໂດລາ/ອອນ ມາເປັນ 1.198,71 ໂດລາ/ອອນ ເນື່ອງຈາກການອ່ອນຄ່າເງິນໂດລາ ເຮັດໃຫ້ນັກລົງທຶນເຂົ້າຊື້ຄໍາ ແລະ ສັນຍາຊື້-ຂາຍຄໍາ ເພື່ອປ້ອງກັນຄວາມສ່ຽງ.

### 2. ສະພາບເງິນຕາພາຍໃນ

– ອັດຕາເງິນເຟີ້ປະຈໍາເດືອນ 10/2018 (ຕົວເລກຄາດຄະເນ) ຢູ່ໃນລະດັບ 3,18% ເພີ່ມຂຶ້ນຈາກ 3,06% ໃນເດືອນຜ່ານມາ. ສາເຫດຍ້ອນການເພີ່ມຂຶ້ນຂອງລາຄາໝວດສະບຽງອາຫານ, ເຄື່ອງດື່ມທີ່ບໍ່ແມ່ນເຫຼົ້າ, ໝວດຄົມມະນາຄົມ ແລະ ການຂົນສົ່ງ.

– ຖານເງິນຕາປະຈໍາເດືອນ 10/2018 ເພີ່ມຂຶ້ນ 381,54 ຕື້ກີບ ຫຼື 0,94% ທຽບໃສ່ເດືອນ 09/2018, ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 4.189,14 ຕື້ກີບ ຫຼື 11,43%. ປະລິມານເງິນ M2 ຫຼຸດລົງ 2.031,19 ຕື້ກີບ ຫຼື 2,41% ທຽບໃສ່ເດືອນ 09/2018, ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 6.710,24 ຕື້ກີບ ຫຼື 8,87%.

– ອັດຕາແລກປ່ຽນທີ່ວລະບົບໃນເດືອນ 10/2018 ທຽບເດືອນ 09/2018 ເໜັງຕີງໃນຂອບທີ່ກຳນົດໄວ້ ຊຶ່ງເຫັນໄດ້ຈາກເງິນກີບແຂງຄ່າຂຶ້ນ 0,20% ທຽບເງິນໂດລາ ແຕ່ອ່ອນຄ່າລົງ 0,87% ທຽບເງິນບາດ. ຖ້າສົມທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າລົງ 3,67% ທຽບກັບເງິນໂດລາ ແລະ ອ່ອນຄ່າລົງ 4,68% ທຽບເງິນບາດ.

– ມູນຄ່າການຊື້-ຂາຍເງິນຕາຕ່າງປະເທດປະຈຳເດືອນ 10/2018 (06/09/2018-10/10/2018) ເຫັນວ່າມູນຄ່າການຊື້-ຂາຍເງິນຕາຕ່າງປະເທດເພີ່ມຂຶ້ນ 19,91% ຖ້າທຽບໃສ່ເດືອນ 09/2018. ທທກ ຂາຍເງິນຕາຕ່າງປະເທດສຸດທິ 106,49 ລ້ານໂດລາທຽບເທົ່າ (ໃນນັ້ນ, ຂາຍເງິນໂດລາສຸດທິ 65,99 ລ້ານໂດລາ ແລະ ຂາຍບາດສຸດທິ 1.294,51 ລ້ານບາດ ຫຼື 40,50 ລ້ານໂດລາທຽບເທົ່າ). ໃນຂະນະດຽວກັນ, ທທລ ຂາຍເງິນຕາຕ່າງປະເທດໃຫ້ ທທກ ສຸດທິ 76,5 ລ້ານໂດລາທຽບເທົ່າ (ໃນນັ້ນ, ຂາຍໂດລາສຸດທິ 65,26 ລ້ານໂດລາ ແລະ ຂາຍບາດ ສຸດທິ 359,19 ລ້ານບາດ ຫຼື 11,24 ລ້ານໂດລາທຽບເທົ່າ), ສ່ວນການຊື້-ຂາຍລະຫວ່າງ ທທກ ດ້ວຍກັນແມ່ນ 19,59 ລ້ານໂດລາທຽບເທົ່າ (ໃນນັ້ນ, ເງິນໂດລາ ຈຳນວນ 11,96 ລ້ານໂດລາ ແລະ ເງິນບາດ ຈຳນວນ 243,8 ລ້ານບາດ ຫຼື 7,63 ລ້ານໂດລາທຽບເທົ່າ;

– ສະພາບການໄຫຼຂອງກະແສເງິນຜ່ານລະບົບທະນາຄານ ປະຈຳເດືອນ 10/2018 (14/09/2018-12/10/2018) ໄດ້ມີກະແສເງິນໄຫຼອອກຜ່ານລະບົບທະນາຄານສຸດທິ 122,13 ລ້ານໂດລາ. ໃນນັ້ນ, ກະແສເງິນໄຫຼອອກຜ່ານລະບົບທະນາຄານ ຈຳນວນ 552,99 ລ້ານໂດລາ ສ່ວນໃຫຍ່ແມ່ນຊຳລະຄ່ານຳເຂົ້າສິນຄ້າ ຈຳນວນ 329,20 ລ້ານໂດລາ, ຊຳລະເງິນກູ້ຂອງຫົວໜ່ວຍທຸລະກິດ ຈຳນວນ 104,48 ລ້ານໂດລາ ແລະ ລາຍຈ່າຍອື່ນໆ ຈຳນວນ 54,38 ລ້ານໂດລາ. ສ່ວນກະແສເງິນໄຫຼເຂົ້າ ຈຳນວນ 430,86 ລ້ານໂດລາ ສ່ວນໃຫຍ່ແມ່ນຮັບເງິນຈາກການສົ່ງອອກສິນຄ້າ ຈຳນວນ 257,53 ລ້ານໂດລາ, ຮັບຈາກການບໍລິການ ຈຳນວນ 78,26 ລ້ານໂດລາ ແລະ ການລົງທຶນໂດຍກົງຈາກຕ່າງປະເທດ ຈຳນວນ 71,66 ລ້ານໂດລາ.

### 3. <u>ການລະດົມເງິນຝາກ ແລະ ການປ່ອຍສິນເຊື່ອ</u>

– ການລະດົມເງິນຝາກຂອງທະນາຄານທຸລະກິດ: ຮອດວັນທີ 10/10/2018 (ຕົວເລກເບື້ອງຕົ້ນ) ທະນາຄານທຸລະກິດມີຍອດເງິນຝາກທັງໝົດ 71.653,72 ຕື້ກີບ ເມື່ອທຽບໃສ່ເດືອນຜ່ານມາ ຫຼຸດລົງ 2,56% ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 8,98%. ເງິນຝາກເປັນເງິນກີບ ຫຼຸດລົງ 0,54% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 46,43% ຂອງຍອດເງິນຝາກທັງໝົດ ແລະ ເງິນຝາກເປັນເງິນຕາຕ່າງປະເທດ ຫຼຸດລົງ 4,24% ຊຶ່ງກວມເອົາ 53,57% ຂອງເງິນຝາກທັງໝົດ;

– ການປ່ອຍສິນເຊື່ອຂອງທະນາຄານທຸລະກິດ: ຮອດວັນທີ 10/10/2018 (ຕົວເລກເບື້ອງຕົ້ນ) ຍອດເຫຼືອສິນເຊື່ອທັງໝົດ 67.349,92 ຕື້ກີບ ຫຼຸດລົງ 0,06% ເມື່ອທຽບໃສ່ເດືອນຜ່ານມາ. ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 3,35%. ສິນເຊື່ອເປັນເງິນກີບກວມເອົາ 48,70% ຂອງສິນເຊື່ອທັງໝົດ ແລະ ສິນເຊື່ອເປັນເງິນຕາຕ່າງປະເທດກວມເອົາ 51,30% ຂອງສິນເຊື່ອທັງໝົດ;

– ທະນາຄານນະໂຍບາຍປ່ອຍສິນເຊື່ອທັງໝົດໃນເດືອນ 10/2018 ຈຳນວນ 1,80 ຕື້ກີບ ທຽບໃສ່ເດືອນຜ່ານມາ ຫຼຸດລົງ 96,96%, ເກັບຕົ້ນທຶນໄດ້ 19,40 ຕື້ກີບ ທຽບໃສ່ເດືອນຜ່ານມາ ຫຼຸດລົງ 0,51 % (ສິນເຊື່ອທັງໝົດທີ່ປ່ອຍໄປສ່ວນໃຫຍ່ແມ່ນໄດ້ສຸມໃສ່ຂະແໜງກະສິກຳ-ປ່າໄມ້, ການຄ້າ ແລະ ປະກອບວັດຖຸເຕັກນິກ). ຍອດສິນເຊື່ອຮອດທ້າຍເດືອນ 10/2018 ມີຈຳນວນ 3.117,89 ຕື້ກີບ ເທົ່າກັບ 99,26% ຂອງແຜນການ (3.140,93 ຕື້ກີບ). ໃນນີ້ສິນເຊື່ອຢູ່ເມືອງເປົ້າໝາຍ 2.065,59 ຕື້ກີບ, ບ້ານເຮັດທົດລອງ 3 ສ້າງ 293,99 ຕື້ກີບ, ຈຸດສຸມລັດຖະບານ-ທ້ອງຖິ່ນ 329,39 ຕື້ກີບ ແລະ ໂຄງການຜະລິດເປັນສິນຄ້າ 428,92 ຕື້ກີບ.

4. ການເຄື່ອນໄຫວຊໍາລະສະສາງ ແລະ ການຊື້-ຂາຍພັນທະບັດ

4.1. ການເຄື່ອນໄຫວຊໍາລະສະສາງ

ການຊໍາລະສະສາງດ້ວຍແຊັກຜ່ານສູນຊໍາລະສະສາງໃນເດືອນນີ້ມີ ຈໍານວນ 3.133 ສະບັບ ຫຼຸດລົງ 4,89% ເປັນເງິນຈໍານວນ 1.789,70 ຕື້ກີບ ຫຼຸດລົງ 5,13% ເມື່ອທຽບໃສ່ເດືອນຜ່ານມາ. ການໂອນເງິນທາງໂທລະສານແບບມີມູນຄ່າສູງໃນເດືອນນີ້ມີ ຈໍານວນ 158 ຄັ້ງ ເພີ່ມຂຶ້ນ 58% ເມື່ອທຽບໃສ່ເດືອນຜ່ານມາ, ມີມູນຄ່າການໂອນ 653 ຕື້ກີບ ເພີ່ມຂຶ້ນ 8,45% ເມື່ອທຽບໃສ່ເດືອນຜ່ານມາ; ສໍາລັບການໂອນເງິນຜ່ານລະບົບຊໍາລະສະສາງມູນຄ່າສູງ (RTGS) ແຕ່ວັນທີ 25/09-24/10/2018 ມີຈໍານວນ 17.062 ຄັ້ງ ລາຍລະອຽດມີດັ່ງນີ້:

– **ສະກຸນເງິນກີບ:** ມີການເຄື່ອນໄຫວຈໍານວນ 16.687 ຄັ້ງ ມີມູນຄ່າການໂອນ 5.063,74 ຕື້ກີບ ເພີ່ມຂຶ້ນ 33,51% ເມື່ອທຽບໃສ່ເດືອນຜ່ານມາ. ໃນນີ້, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກໍາຫຼາຍກວ່າໝູ່ຈໍານວນ 5.230 ຄັ້ງ. ໃນນັ້ນ, ມີຜູ້ໃຊ້ບໍລິການທີ່ເຮັດທຸລະກໍາ 43 ແຫ່ງ;

– **ກະຊວງການເງິນ:** ມີການເຄື່ອນໄຫວຈໍານວນ 375 ຄັ້ງ ມີມູນຄ່າການໂອນ 447,15 ຕື້ກີບ ເພີ່ມຂຶ້ນ 1,77% ທຽບໃສ່ເດືອນຜ່ານມາ.

4.2. ການຊື້-ຂາຍພັນທະບັດ

– ໃນເດືອນ 10/2018 ພັນທະບັດກະຊວງການເງິນໄດ້ມີການຈໍາໜ່າຍພັນທະບັດບ້ວງລະດົມທຶນຜ່ານ ທຫລ ຈໍານວນ 72 ຕື້ກີບ. ໃນນັ້ນ, ຈໍາໜ່າຍໃຫ້ຫ້ອງການກອງທຶນປະກັນສັງຄົມ (ພາກວິສາຫະກິດ) ຈໍານວນ 08 ຕື້ກີບ, ກອງທຶນປົກປ້ອງຜູ້ຝາກເງິນ ຈໍານວນ 10 ຕື້ກີບ, ທະນາຄານສົ່ງເສີມກະສິກໍາ ຈໍານວນ 20 ຕື້ກີບ, ທະນາຄານພົງສະຫວັນ 4 ຕື້ກີບ, ທະນາຄານຮ່ວມທຸລະກິດລາວ-ຫວຽດ ຈໍານວນ 20 ຕື້ກີບ ແລະ ທະນາຄານກຸງເທບປາກເຊ ຈໍານວນ 10 ຕື້ກີບ ແລະ ໄຖ່ຖອນພັນທະບັດ ຈໍານວນ 28 ຕື້ກີບ. ໃນນັ້ນ, ໄຖ່ຖອນທະນະບັດ ໃຫ້ຫ້ອງການກອງທຶນປະກັນສັງຄົມ (ພາກວິສາຫະກິດ) ຈໍານວນ 5 ຕື້ກີບ, ທະນາຄານພົງສະຫວັນ ຈໍານວນ 3 ຕື້ກີບ ແລະ ທະນາຄານຮ່ວມທຸລະກິດລາວ-ຫວຽດ ຈໍານວນ 20 ຕື້ກີບ;

– ພັນທະບັດຂອງກະຊວງການເງິນມີຍອດເຫຼືອທັງໝົດ 3 ບ້ວງ ມູນຄ່າ 5.535,70 ຕື້ກີບ ແລະ 65 ລ້ານໂດລາ (ບ້ວງລະດົມທຶນ ທທກ ໂດຍກົງ 24 ຕື້ກີບ ແລະ 65 ລ້ານໂດລາ, ພັນທະບັດບ້ວງລ້າງໜີ້ 2.573 ຕື້ກີບ, ບ້ວງລະດົມທຶນຈາກ ທທກ ປະມູນຜ່ານ ທຫລ 2.998,70 ຕື້ກີບ);

– ສໍາລັບພັນທະບັດທະນາຄານແຫ່ງ ສປປ ລາວ ໃນເດືອນ 10/2018 ບໍ່ມີການຈໍາໜ່າຍ, ປັດຈຸບັນຍັງມີຍອດເຫຼືອພັນທະບັດບໍ່ທັນໄຖ່ຖອນທັງໝົດ 404 ລ້ານໂດລາສະຫະລັດ.

5. ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວໃນເດືອນນີ້ປິດຢູ່ທີ່ 839,55 ຈຸດ ຫຼຸດລົງ 4,57% ເມື່ອທຽບໃສ່ເດືອນຜ່ານມາ ແລະ ຫຼຸດລົງ 15,91% ເມື່ອທຽບໃສ່ດັດຊະນີທ້າຍປີຜ່ານມາ, ຕະຫຼອດເດືອນມີປະລິມານຊື້-ຂາຍຮຸ້ນທັງໝົດ 1,52 ລ້ານກວ່າຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 5,65 ຕື້ກວ່າກີບ ຫຼຸດລົງ 2,22% ທຽບໃສ່ເດືອນຜ່ານມາ, ໂດຍເປັນຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 66,45% ຂອງມູນຄ່າການຊື້-ຂາຍທັງໝົດ. ສາເຫດຫຼຸດລົງຂອງດັດຊະນີຕະຫຼາດຫຼັກຊັບລາວແມ່ນຍ້ອນການປັບຕົວຫຼຸດລົງຂອງລາຄາຮຸ້ນ EDL-Gen, PTL, SVN, LCC ແລະ MHTL ເຊິ່ງເປັນຜົນມາຈາກການຂາຍຮຸ້ນອອກຂອງຜູ້ລົງທຶນຕ່າງປະເທດ ເປັນສ່ວນໃຫຍ່.

– ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍປິດຕົວຢູ່ລະດັບເກົ່າຄື: 5.600 ກີບ/ຮຸ້ນ, ມີປະລິມານຊື້-ຂາຍທັງໝົດ 384.700 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,15 ຕື້ກວ່າກີບ ຫຼຸດລົງ 29,03% ເມື່ອທຽບໃສ່ເດືອນຜ່ານມາ;

– ຮຸ້ນຂອງບໍລິສັດຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍປິດຕົວຢູ່ລະດັບ 4.050 ກີບ/ຮຸ້ນ ຫຼຸດລົງ 250 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 474.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,95 ຕື້ກວ່າກີບ ເພີ່ມຂຶ້ນ 66,48% ເມື່ອທຽບໃສ່ເດືອນຜ່ານມາ;

– ຮຸ້ນຂອງບໍລິສັດລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍປິດຕົວຢູ່ລະດັບເກົ່າຄື: 8.000 ກີບ/ຮຸ້ນ ແຕ່ບໍ່ມີການຊື້-ຂາຍຮຸ້ນ;

– ຮຸ້ນຂອງບໍລິສັດປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍປິດຕົວຢູ່ທີ່ລະດັບ 1.400 ກີບ/ຮຸ້ນ ຫຼຸດລົງ 200 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 13.100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 18,48 ລ້ານກວ່າກີບ ເພີ່ມຂຶ້ນ 616,47% ທຽບໃສ່ເດືອນຜ່ານມາ ເນື່ອງຈາກການເຂົ້າມາຊື້-ຂາຍຂອງຜູ້ລົງທຶນພາຍໃນເປັນຈຳນວນຫຼາຍ;

– ຮຸ້ນຂອງບໍລິສັດສຸວັນນີໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາຊື້-ຂາຍປິດຕົວຢູ່ລະດັບ 1.500 ກີບ/ຮຸ້ນ ຫຼຸດລົງ 100 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນຜ່ານມາ ແຕ່ບໍ່ມີການຊື້-ຂາຍຮຸ້ນ;

– ຮຸ້ນຂອງບໍລິສັດພູສີກໍ່ສ້າງ ມະຫາຊົນ (PCD) ມີລາຄາຊື້-ຂາຍປິດຕົວຢູ່ລະດັບເກົ່າຄື: 1.200 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 500 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 0,60 ລ້ານກີບ ຫຼຸດລົງ 50% ເມື່ອທຽບໃສ່ເດືອນຜ່ານມາ;

– ຮຸ້ນຂອງບໍລິສັດຊີມັງລາວ (LCC) ມີລາຄາຊື້-ຂາຍປິດຕົວຢູ່ລະດັບ 1.900 ກີບ/ຮຸ້ນ ຫຼຸດລົງ 100 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນຜ່ານມາ ແລະ ມີປະລິມານຊື້-ຂາຍທັງໝົດ 1.500 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,90 ລ້ານກີບ ຫຼຸດລົງ 83,68% ເມື່ອທຽບໃສ່ເດືອນຜ່ານມາ;

– ຮຸ້ນຂອງບໍລິສັດມະຫະທຶນເຊົ່າສິນເຊື່ອ ມະຫາຊົນ (MHTL) ມີລາຄາຊື້-ຂາຍປິດຕົວຢູ່ລະດັບ 2.900 ກີບ/ຮຸ້ນ ຫຼຸດລົງ 150 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 412.500 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,18 ຕື້ກວ່າກີບ ຫຼຸດລົງ 23,55% ເມື່ອທຽບໃສ່ເດືອນຜ່ານມາ;

– ຮຸ້ນຂອງບໍລິສັດລາວອາໂກຣເທັກ ມະຫາຊົນ (LAT) ເປີດການຊື້-ຂາຍມື້ທຳອິດໃນວັນທີ 25 ກັນຍາ 2018, ທີ່ລາຄາ 750 ກີບ/ຮຸ້ນ, ຊຶ່ງເຮັດໃຫ້ມີປະລິມານຊື້-ຂາຍທັງໝົດ 243.400 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 338,20 ລ້ານກວ່າກີບ.

6. ວຽກງານອື່ນໆ

– ວຽກງານຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ: ສຳເລັດການລົງກວດກາທະນາຄານທອງຄຳລາວ ຈຳກັດ ສາຂານະຄອນຫຼວງວຽງຈັນ; ສຳເລັດການອອກໜັງສືຢັ້ງຢືນການເພີ່ມທຶນຈົດທະບຽນໃຫ້ທະນາຄານ ມາຣູຮານເຈແປນ ລາວ ຈຳກັດ; ສຳເລັດການເກັບກຳແບບຟອມສັງລວມລາຍງານການປະເມີນຊ່ອງວ່າງຂອງທະນາຄານທຸລະກິດ ໃນການຈັດຕັ້ງປະຕິບັດຕາມມາດຕະຖານບາເຊວ 2 ຈຳນວນ 11 ແຫ່ງ; ສຳເລັດການເກັບຄ່າຄຸ້ມຄອງປະຈຳປີ 2017 ຈາກສະຖາບັນການເງິນ ຈຳນວນ 40 ແຫ່ງ; ເຫັນດີຮັບຮອງປ່ຽນຄະນະສະພາບໍລິຫານ ແລະ ຄະນະອຳນວຍການຂອງບໍລິສັດເຊົ່າສິນເຊື່ອ ຈຳນວນ 02 ແຫ່ງ (ບໍລິສັດ ດີຈີບີ ແລະ ບໍລິສັດ ອີອອນ ບໍລິການ);

– ວຽກງານຄຸ້ມຄອງຫຼັກຊັບ: ຮັບຮອງລະບຽບວ່າດ້ວຍ ການເປີດເຜີຍຂໍ້ມູນຢູ່ຕະຫຼາດຫຼັກຊັບ (ສະບັບປັບປຸງໃໝ່); ສຳເລັດການອອກໃບຮັບຮອງໃຫ້ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂານະຄອນຫຼວງວຽງຈັນ ເຄື່ອນໄຫວເປັນທະນາຄານດູແລຊັບສິນໃນວຽກງານຫຼັກຊັບ; ສຳເລັດການລົງກວດກາປະຈຳປີ 2018 ຂອງບໍລິສັດຫຼັກຊັບ ເອພີເອັມລາວ ຈຳກັດ ແລະ ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ; ພ້ອມທັງສຳເລັດການອອກແຈ້ງການໃຫ້

ພາກສ່ວນກ່ຽວຂ້ອງຮັບຊາບ ກ່ຽວກັບການລຶບລ້າງບົດແນະນຳວ່າດ້ວຍລະຫັດຫຼັກຊັບ (ສະບັບເລກທີ 112/ສຄລຕ, ລົງວັນທີ 07 ກຸມພາ 2018);

– ອອກແຈ້ງການເຖິງບັນດາສະຖາບັນການເງິນ ກ່ຽວກັບການປະຕິບັດເຄື່ອງໝາຍຫົວໜ່ວຍຕົວເລກ ແລະ ຈຳນວນເສດສ່ວນ, ພ້ອມທັງແຈ້ງຫ້າມຖືຄອງ, ດຳເນີນທຸລະກຳ ຫຼື ມີສ່ວນຮ່ວມໃນການສະໜັບສະໜູນການເຮັດທຸລະກຳທີ່ກ່ຽວຂ້ອງກັບເງິນຄຣິບໂຕ;

– ສຳເລັດການສະຫຼຸບການຈັດຕັ້ງປະຕິບັດແຜນເງິນຕາ 8 ເດືອນຕົ້ນປີ, ຄາດຄະເນໝົດປີ 2018 ແລະ ທິດທາງແຜນການປີ 2019;

– ສຳເລັດການຮັບຮອງຂໍ້ຕົກລົງວ່າດ້ວຍ ການປະຕິບັດມາດຕະການປັບໃໝ ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວທີ່ລາຍງານ ແລະ ເປີດເຜີຍຂໍ້ມູນຊັກຊ້າກວ່າເວລາທີ່ກຳນົດໄວ້.

## ພາກທີ II

## ວຽກງານຈຸດສຸມໃນເດືອນຕໍ່ໄປ

– ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນດັ່ງທີ່ໄດ້ກຳນົດໄວ້ໃນແຜນງານປະຈຳປີເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ, ຄວບຄຸມປະລິມານເງິນ ແລະ ຮັບປະກັນລະບົບການຊຳລະສະສາງໃຫ້ຄ່ອງຕົວ, ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ເພື່ອຮັບປະກັນສະຖຽນລະພາບທາງດ້ານການເງິນ, ຊຸກຍູ້ການເຄື່ອນໄຫວຕະຫຼາດລະຫວ່າງທະນາຄານ; ສືບຕໍ່ຕິດຕາມສະພາບອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນໃຫ້ຢູ່ໃນຂອບເຂດທີ່ກຳນົດໄວ້, ໃນນັ້ນເອົາໃຈໃສ່ເປັນພິເສດຕິດຕາມການເຄື່ອນໄຫວຂອງຮ້ານແລກປ່ຽນເງິນຕາຢ່າງໃກ້ຊິດ, ຄວບຄຸມປັດໄຈຕ່າງໆທີ່ຈະກະທົບໃຫ້ເກີດເງິນເຟີ້; ເອົາໃຈໃສ່ບໍລິຫານຄັງສຳຮອງເງິນຕາຕ່າງປະເທດໃຫ້ໄດ້ຕາມແຜນທີ່ກຳນົດໄວ້;

– ສືບຕໍ່ຄຸ້ມຄອງເງິນຕາຕ່າງປະເທດ, ການຊຳລະໂດຍບໍ່ໃຊ້ເງິນສົດ, ເກັບກຳສະພາບການຕິດລາຄາສິນຄ້າ ແລະ ບໍລິການຂອງບັນດາຕະຫຼາດ, ຫ້າງຮ້ານພາຍໃນນະຄອນຫຼວງວຽງຈັນ;

– ຊຸກຍູ້ບັນດາທະນາຄານທຸລະກິດເພີ່ມທະວີການລະດົມເງິນຝາກດ້ວຍຫຼາຍຮູບ, ຫຼາຍສີ ໂດຍສະເພາະເງິນຝາກໄລຍະຍາວທີ່ເໝາະສົມສອດຄ່ອງກັບຄວາມຕ້ອງການຕົວຈິງຂອງສັງຄົມ ໄປຄຽງຄູ່ກັບການປັບປຸງການບໍລິການຂອງຕົນໃຫ້ມີຄວາມສະດວກວ່ອງໄວ ແລະ ທັນໄປສູ່ຄວາມເປັນທັນສະໄໝເທື່ອລະກ້າວ. ກຳນົດອັດຕາດອກເບ້ຍໃຫ້ສອດຄ່ອງກັບສະພາບການພາຍໃນ ແລະ ສາກົນ. ຕິດຕາມການປ່ອຍສິນເຊື່ອຢ່າງໃກ້ຊິດ ແລະ ການປັບປຸງໂຄງສ້າງໜີ້ໃຫ້ແທດເໝາະ ເພື່ອຮັບປະກັນບໍ່ໃຫ້ເກີດໜີ້ເສຍເກີນ 3%;

– ສືບຕໍ່ປັບປຸງນິຕິກຳຈຳນວນໜຶ່ງເປັນຕົ້ນ: ດຳລັດວ່າດ້ວຍຄັງສຳຮອງເງິນຕາຕ່າງປະເທດຂອງລັດ; ຂໍ້ຕົກລົງວ່າດ້ວຍການສ້າງຕັ້ງກອງທຶນຮ່ວມ ແລະ ຮ່າງຂໍ້ຕົກລົງວ່າດ້ວຍບໍລິສັດບໍລິຫານກອງທຶນຮ່ວມ; ຄົ້ນຄວ້າປຶກສາຫາລືກ່ຽວກັບການກຳນົດທິດທາງໃນການສ້າງນິຕິກຳລຸ່ມກົດໝາຍວ່າດ້ວຍລະບົບຊຳລະ; ຄູ່ມືການວິເຄາະຄວາມສ່ຽງບໍລິສັດ; ບົດແນະນຳເພີ່ມເຕີມ ກ່ຽວກັບການຈັດຕັ້ງປະຕິບັດຂໍ້ຕົກລົງວ່າດ້ວຍການຄຸ້ມຄອງມາດຕະຖານທະນະບັດໃນຂອດຈໍລະຈອນ;

– ສືບຕໍ່ກະກຽມກອງປະຊຸມ ຄື: ❶ ກະກຽມບົດລາຍງານແຜນເງິນຕາ ແລະ ເອກະສານກ່ຽວຂ້ອງເພື່ອກະກຽມກອງປະຊຸມສະພາແຫ່ງຊາດ; ❷ ກອງປະຊຸມທະວິພາຄີຮ່ວມກັບທະນາຄານແຫ່ງປະເທດໄທ; ❸ ກອງປະຊຸມສະພາບໍລິຫານ ທຫລ ຄັ້ງທີ II ປີ 2018; ❹ ກອງປະຊຸມເຜີຍແຜ່ ຂໍ້ຕົກລົງວ່າດ້ວຍຄ່າທຳນຽມ, ຄ່າບໍລິການ ແລະ ຄ່າຄຸ້ມຄອງການເງິນທີ່ບໍ່ແມ່ນທະນາຄານ ແລະ ❺ ກອງປະຊຸມ ຮ່ວມມືລະຫວ່າງ ທຫລ ກັບ ອົງການຮ່ວມມືລາວ-ເຢຍລະມັນ

GIZ, ອົງການຮ່ວມມື ແລະ ພັດທະນາເສດຖະກິດ (OECD), ສະຖາບັນທະນາຄານພັດທະນາອາຊີ (ADBI) ໃນຫົວຂໍ້: ວຽກງານການສຶກສາດ້ານການເງິນ ແລະ ປົກປ້ອງຜູ້ຊົມໃຊ້ທາງການເງິນ ເພື່ອສະໜັບສະໜູນການເຂົ້າເຖິງການບໍລິການທາງການເງິນ; ພ້ອມທັງ, ກະກຽມຝຶກອົບຮົບວຽກງານກວດກາຄັ້ງທີ XI ປະຈຳປີ 2018;

– ສືບຕໍ່ສະຫຼຸບ, ສັງລວມການກຳນົດຕຳແໜ່ງງານຢູ່ ທຫລ ແລະ ການສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງຢູ່ຂະແໜງການທະນາຄານ;
– ສືບຕໍ່ຮ່າງຍຸດທະສາດການເຂົ້າເຖິງທາງການເງິນຂອງ ສປປ ລາວ ໄລຍະ 8 ປີ (2018-2025);
– ຕິດຕາມການແກ້ໄຂບັນຫາບໍລິສັດ PS ຊຶ່ງລໍຖ້າຂະບວນການຕັດສິນຂອງໄອຍະການນະຄອນຫຼວງວຽງຈັນ;
– ສືບຕໍ່ວຽກງານປ້ອງກັນເວນຍາມຮັກສາຄວາມປອດໄພອາຄານສຳນັກງານໃຫ້ມີຄວາມສະຫງົບປອດໄພ.

ຮັກສາການ ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ສອນໄຊ ສິດພະໄຊ

ສົ່ງ:
- ຄະນະຜູ້ວ່າການ ທຫລ.
- ຜູ້ຊ່ວຍຜູ້ວ່າການ ທຫລ.
- ຫ້ອງວ່າການສູນກາງພັກ.
- ກົມຄົ້ນຄວ້າສັງລວມ, ສຳນັກງານປະທານປະເທດ.
- ກົມຄົ້ນຄວ້າ-ສັງລວມ, ຫສນຍ.
- ຫ້ອງການກະຊວງແຜນການ ແລະການລົງທຶນ.
- ຫ້ອງການກະຊວງການເງິນ.
- ຄະນະກຳມະທິການແຜນການການເງິນແລະການກວດສອບສະພາແຫ່ງຊາດ.
- ບັນດາກົມ ແລະທຽບເທົ່າກົມພາຍໃນທຫລ.
- ຄະນະຫ້ອງການທຫລ.
- ສຳເນົາ.